**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

# ບົດບັນທຶກ
## ກອງປະຊຸມລະດັບວິຊາການໜ່ວຍງານວິຊາການຂະແໜງການສຶກສາ (ESSWG)
**ວັນອັງຄານ, ວັນທີ 24 ກັນຍາ 2024 ເວລາ 14:00 ໂມງ - 16:45 ໂມງ**

ທ່ານ ປອ ສຳລານ ພັນຄະວົງ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ
ທ່ານ ນາງ ເບັນນິຕາ ຊຳເມີວິວ ຮອງເອກອັກຄະລັດຖະທູດອົດສະຕຣາລີ
ທ່ານ ນາງ ເວຍເລີ ສະເມັດ ຫົວໜ້າຝ່າຍການຮ່ວມມື, ຫ້ອງການສະຫະພາບເອີຣົບ

**ຮູບແບບກອງປະຊຸມ**: ແບບເຊິ່ງໜ້າ ແລະ ອອນລາຍ
ຜູ້ເຂົ້າຮ່ວມກອງປະຊຸມ: ແບບເຊິ່ງໜ້າ 45 (ຍິງ 11) ແລະ ແບບອອນລາຍ 42 (ລວມທັງໝົດ 87 ທ່ານ)

**ຫົວຂໍ້ກອງປະຊຸມ:**

- ຮັບຮອງຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນກອງທຶນຮ່ວມມືສາກົນເພື່ອການສຶກສາ (GPE) ສຳລັບທຶນການຫັນປ່ຽນລະບົບ (STG) and ທຶນການສ້າງຂີດຄວາມສາມາດລະບົບ (SCG)
- ຮັບຮອງແຜນເພື່ອຂໍທຶນພັດທະນາເອກະສານໂຄງການ STG
- ການກະກຽມສ້າງແຜນ 5 ປີ ຄັ້ງທີ 10 (2026-2030)
- ປຶກສາຫາລືກ່ຽວກັບແຜນການເພີ່ມງົບປະມານສຳລັບໂຄງການ GPE III
- ລາຍງານກ່ຽວກັບແຜນບຸລິມະສິດໃນການພັດທະນາການສຶກສາ ສຳລັບສົກຮຽນ 2024-25

### 1. ພິທີກ່າວເປີດກອງປະຊຸມ ໂດຍທ່ານປະທານ: ທ່ານ ປອ ສຳລານ ພັນຄະວົງ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ

ທ່ານ ປອ ສຳລານ ພັນຄະວົງ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ໄດ້ສະແດງຄວາມຂອບໃຈປະທານຮ່ວມ ເຊິ່ງເປັນກອງປະຊຸມຄັ້ງທຳອິດສຳລັບປະທານຮ່ວມທັງສອງທ່ານ ກໍຄື ທ່ານ ນາງ ເບັນນິຕາ ຊຳເມີວິວ ແລະ ທ່ານ ນາງ ເວຍເລີ ສະເມັດ ແລະ ພິເສດ ແມ່ນສະແດງການຕ້ອນຮັບ ທ່ານ ບິລາລ ອູແຮັງ ເຊັບ ດູຣານີ ຜູ້ຕາງໜ້າຈາກອົງການ ອຸຍນິເຊັບ ປະຈຳ ສປປ ລາວ ຄົນໃໝ່. ທ່ານປະທານກອງປະຊຸມຍັງໄດ້ກ່າວຂອບໃຈ ແລະ ຍີ້ຍາມຖາມຂ່າວທ່ານ ແດນ ເຮວເດີນ ແລະ ທ່ານ ແວັງຊອງ ເວຍຣ ປະທານຮ່ວມຈາກສະຖານທູດອົດສະຕຣາລີ ແລະ ສະຫະພາບເອີຣົບ ທີ່ໄດ້ສຳເລັດພາລະກິດ ໃນ ສປປ ລາວ ແລະ ໄດ້ກັບຄືນປະເທດຂອງຕົນແລ້ວ, ພ້ອມທັງສະແດງຄວາມຂອບໃຈບັນດາຄູ່ຮ່ວມພັດທະນາທີ່ໃຫ້ການສະໜັບສະໜູນ ແລະ ການຮ່ວມມືອັນດີງາມຕະຫຼອດມາ, ແລະ ຫວັງວ່າຈະໄດ້ປຶກສາຫາລືຢ່າງກົງໄປກົງມາ ແລະ ບັນລຸໝາກຜົນຂອງກອງປະຊຸມ. ນອກຈາກນັ້ນ, ທ່ານຍັງໄດ້ເນັ້ນເຖິງຈຸດປະສົງ ແລະ ຄວາມສຳຄັນ ຂອງກອງປະຊຸມທີ່ຈັດຂຶ້ນໃນມື້ນີ້ດັ່ງນີ້: 1). ຮັບຮອງເອົາຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ GPE (STG ແລະ SCG), 2). ຮັບຮອງແຜນເພື່ອ ຂໍທຶນມາພັດທະນາເອກະສານໂຄງການ STG, 3). ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບຂະບວນ

ການສ້າງແຜນ 5 ປີ ຄັ້ງທີ 10 (2026-2030), 4). ປຶກສາຫາລືກ່ຽວກັບແຜນການເພີ່ມງົບປະມານສໍາລັບໂຄງການ GPE III ແລະ 5). ນໍາສະເໜີແຜນບຸລິມະສິດໃນການພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ສົກຮຽນ 2024-2025.

2. **ຄໍາເຫັນຂອງທ່ານປະທານຮ່ວມ**

ທ່ານນາງ ເບັນນິຕາ ຊໍາເມີວິວ ຮອງເອກອັກຄະລັດຖະທູດອົດສະຕຣາລີ ໄດ້ແນະນໍາຕົນເອງ ທີ່ໄດ້ມາປະຈໍາຢູ່ລາວໄດ້ 6 ອາທິດແລ້ວ ສໍາລັບກອງປະຊຸມຄັ້ງນີ້ແມ່ນຄັ້ງທໍາອິດຂອງຕົນ ແລະ ປະທານຮ່ວມ ທ່ານນາງ ເວຍເລີ ເຊັ່ນກັນ. ທ່ານປະທານຮ່ວມໄດ້ສະແດງຄວາມເສຍໃຈນໍາການສູນເສຍຈາກໄພນໍ້າຖ້ວມທີ່ແຂວງຫຼວງນໍ້າທາ ແລະ ແຂວງອື່ນໆໃນພາກເໜືອ ແລະ ໃນນະຄອນຫຼວງວຽງຈັນ ແລະ ຊົມເຊີຍການເຄື່ອນໄຫວຂອງບັນດາກະຊວງ ແລະ ຄູ່ຮ່ວມພັດທະນາໃນການຊ່ວຍບັນເທົາທຸກໄພພິບັດຄັ້ງນີ້. ທ່ານໄດ້ສະແດງຄວາມຍິນດີກັບທ່ານ ສີທອງ ສີຂາວ ທີ່ຫາກໍ່ໄດ້ຮັບການແຕ່ງຕັ້ງວ່າການຫົວໜ້າກົມແຜນການ ແລະ ຂອບໃຈທ່ານ ປອ. ບຸນປັນ ໄຊມຸນຕຣີ ສໍາລັບການຊີ້ນໍາກົມແຜນການໃນຫຼາຍປີທີ່ຜ່ານມາ. ນອກນັ້ນ, ທ່ານກໍສະແດງຄວາມຍິນດີກັບ ທ່ານ ນາງ ວົງເດືອນ ໄອໃສ ແລະ ທ່ານ ນາງ ດອກແກ້ວ ພົນທະຈິດ ທີ່ຫາກໍ່ໄດ້ຮັບການແຕ່ງຕັ້ງ ເປັນຮັກສາການແທນຫົວໜ້າກົມການສຶກສາຄູ ແລະ ກົມກິດຈະການນັກສຶກສາ. ເຖິງວ່າຫາກໍ່ມາປະຈໍາການໃນເວລາທີ່ສັ້ນ ແຕ່ທ່ານປະທານຮ່ວມກໍໄດ້ຍິນຄໍາຊົມເຊີຍກ່ຽວກັບໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ທີ່ເປັນເວທີສົນທະນາປຶກສາຫາລືບັນຫາສໍາຄັນຕ່າງໆໃນຂະແໜງການຢ່າງເປີດເຜີຍ ແລະ ກົງໄປກົງມາ. ອົດສະຕຣາລີ ມີຄວາມພູມໃຈທີ່ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ແລະ ສະຫະພາບເອີຣົບ, ຜ່ານກົນໄກດັ່ງກ່າວ ແລະ ຜ່ານກິດຈະກໍາສະໜັບສະໜູນໂດຍກົງໃຫ້ແກ່ກະຊວງ ເພື່ອຊ່ວຍປັບປຸງຄຸນນະພາບການສຶກສາໃຫ້ແກ່ເດັກນ້ອຍໃນລາວ. ກອງປະຊຸມມີວາລະສໍາຄັນຫຼາຍຂໍ້. ທ່ານປະທານຮ່ວມຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມມີຄໍາເຫັນຕໍ່ແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ 10. ສປປ ລາວ ຄາດວ່າຈະໄດ້ຮັບທຶນຈາກ GPE ຈໍານວນ 12,6 ລ້ານໂດລາ ແລະ ຈະເປັນການດີທີ່ຈະສາມາດຮັບຮອງຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ ແລະ ສືບຕໍ່ຂະບວນການທີ່ສໍາຄັນຕໍ່ໄປ. ບັນຫາຕ່າງໆໃນຂະແໜງການສຶກສາອາດມີສາຍເຫດທີ່ກວ້າງກວ່າຂະແໜງການສຶກສາ ແລະ ການແກ້ໄຂກໍອາດຕ້ອງມີການຮ່ວມມືກັນກັບຫຼາຍຂະແໜງການເຊັ່ນກັນ. ກ່ອນຈະຈົບການມີຄໍາເຫັນ ທ່ານນາງ ເບັນນິຕາ ໄດ້ເຊີນໃຫ້ປະທານຮ່ວມ ທ່ານນາງ ເວຍເລີ ມີຄໍາເຫັນກ່າວແນະນໍາຕົນເອງ.

3. **ຄໍາເຫັນ ແລະ ການສົນທະນາ:**

**3.1. ບົດສະເໜີທີ 1:** ຮັບຮອງຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ GPE (STG and SCG) ໂດຍທ່ານ ສີທອງ ສີຂາວ ວ່າການແທນຫົວໜ້າກົມແຜນການ.

ທ່ານ ສີທອງ ໄດ້ຕາງໜ້າກົມແຜນການນໍາສະເໜີຂະບວນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນເຊິ່ງໄດ້ດໍາເນີນຢ່າງເປີດກວ້າງ ແລະ ໂປ່ງໃສ. ຈາກການສະເໜີຮັບຮອງຜົນການຄັດເລືອກໃນກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາທິການ ແລະ ກິລາ ລະດັບວິຊາການຄັ້ງວັນທີ 1 ກໍລະກົດ 2024, ແຕ່ບໍ່ສາມາດຮັບຮອງໄດ້ ເນື່ອງຈາກວ່າ ອົງການ ອຸຍນິເຊັບ ໄດ້ມີຄໍາຖາມໄປຫາກອງເລຂາ GPE ກ່ຽວກັບຂະບວນການຄັດເລືອກ ແລະ ຜົນການຄັດເລືອກ ແລະ ຂໍໃຫ້ກອງເລຂາກອງທຶນມີຄໍາເຫັນກ່ອນຈະມີການຮັບຮອງ. ຫຼັງຈາກນັ້ນ, ກອງເລຂາກອງທຶນໄດ້ມີຄໍາເຫັນຕອບກັບໃນວັນທີ 7 ສິງຫາ ແລະ

ຍັງຍືນເຫັນດີຕາມຜົນການຄັດເລືອກໂດຍຄະນະກຳມະການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ ທີ່ນຳພາໂດຍກະຊວງສຶກສາທິການ ແລະ ກິລາ. ພ້ອມກັນນັ້ນ, ກະຊວງການຕ່າງປະເທດ ໄດ້ສະເໜີໃຫ້ກະຊວງສຶກສາທິການ ແລະ ກິລາ ປະສານກັບກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນກ່ຽວຂ້ອງໃນການຄັດເລືອກດັ່ງກ່າວ. ໃນວັນທີ 16 ກັນຍາ 2024, ກະຊວງແຜນການ ແລະ ການລົງທຶນໄດ້ເຫັນດີຕາມຜົນການຄັດເລືອກຂອງຄະນະກຳມະການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ. ດັ່ງນັ້ນ ສະເໜີໃຫ້ກອງປະຊຸມໃນມື້ນີ້ຮັບຮອງເອົາຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນຢ່າງເປັນທາງການ ໂດຍແມ່ນອົງການຊ່ວຍເຫຼືອເດັກສາກົນ ເປັນຕົວແທນຜູ້ຄຸ້ມຄອງທຶນການຫັນປ່ຽນລະບົບ (STG) ແລະ ອົງການຢູນິເຊັບເປັນຕົວແທນຜູ້ຄຸ້ມຄອງທຶນການສ້າງຂີດຄວາມສາມາດລະບົບ (SCG) ຕາມຜົນການຄັດເລືອກໃນເບື້ອງຕົ້ນ.

ທ່ານ ບິລາລ ອູແຣັງ ເຊັບ ດູຣານີ ຜູ້ຕາງໜ້າຈາກ ອົງການຢູນິເຊບ ປະຈຳ ສປປ ລາວ ໄດ້ສະແດງຄວາມຊົມເຊີຍຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ທີ່ມີຄວາມພະຍາຍາມສູງໃນການພັດທະນາ ແລະ ຍົກລະດັບຄຸນນະພາບຂອງການສຶກສາ, ວິທະຍາສາດ ແລະ ກິລາ. ຂໍຊົມເຊີຍມາຍັງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການຕ່າງປະເທດ ແລະ ກະຊວງອື່ນໆ ທີ່ໃຫ້ການສະໜັບສະໜູນ. ໃນນາມຜູ້ຕາງໜ້າຈາກອົງການ ອຸຍນິເຊັບ ພວກເຮົາເຫັນດີເປັນເອກະພາບໃນການຮັບຮອງ ຜົນການຕັດສິນຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ GPE. ອົງການ ອຸຍນິເຊັບ ຍິນດີເຮັດວຽກຮ່ວມກັບກະຊວງສຶກສາ ທິການ ແລະ ກິລາ ແລະ ອົງການຊ່ວຍເຫຼືອເດັກໃນຂັ້ນຕອນຕໍ່ໄປ. ສ່ວນການໄປຢ້ຽມຢາມແຂວງຫຼວງນ້ຳທາ ຮ່ວມກັບທ່ານລັດຖະມົນຕີ ກໍ່ເຫັນວ່າຂະແໜງການສຶກສາ ແມ່ນຖືກຜົນກະທົບຢ່າງໜັກໜ່ວງ ລວມທັງການດຳລົງຊີວິດຂອງປະຊາຊົນກໍ່ພົບຄວາມຫຍຸ້ງຍາກ.

ຕາມການນຳພາຂອງທ່ານປະທານ, ກອງປະຊຸມໄດ້ຮັບຮອງເອົາຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນຈາກກອງທຶນຮ່ວມມືສາກົນເພື່ອການສຶກສາ ຕາມການສະເໜີຂອງກົມແຜນການ.

3.2. **ບົດສະເໜີທີ 2:** ຮັບຮອງແຜນເພື່ອຂໍທຶນ ພັດທະນາເອກະສານໂຄງການ STG ໂດຍ ທ່ານ ສີທອງ ສີຂາວ ວ່າການແທນຫົວໜ້າ ກົມແຜນການ.

ພາຍຫຼັງທີ່ກອງປະຊຸມຮັບຮອງເອົາຕົວແທນຜູ້ຄຸ້ມຄອງທຶນ GPE, ພວກເຮົາຈະໄດ້ກະກຽມເອກະສານໂຄງການ ຊຶ່ງຈະໃຊ້ເວລາປະມານ 6 ເດືອນ. ນອກນັ້ນ, ເພື່ອກະກຽມເອກະສານໂຄງການ, ສປປ ລາວ ສາມາດຂໍງົບປະມານເພື່ອກະກຽມໂຄງການ ຈາກ GPE ປະມານ 200,000 ໂດລາສະຫະລັດ ເຊິ່ງຈະຖືກຈັດຕັ້ງປະຕິບັດໂດຍຕົວແທນຜູ້ຄຸ້ມຄອງທຶນ. ແຜນການກະກຽມເອກະສານໂຄງການເຊິ່ງລວມມີການເກັບກຳຂໍ້ມູນ, ການປຶກສາຫາລືກັບທຸກພາກສ່ວນ ໂດຍສະເພາະແມ່ນບັນກົມໃນກະຊວງສຶກສາ ທິການ ແລະ ກິລາ ແລະ ຂັ້ນທ້ອງຖິ່ນ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ບັນດາຄູ່ຮ່ວມພັດທະນາ ຊຶ່ງອາດຈະໄດ້ມີກອງປະຊຸມແບບຊ້ອງໜ້າຢ່າງກວ້າງຂວາງ.

ຕໍ່ຄຳຖາມທີ່ວ່າງົບປະມານກະກຽມເອກະສານໂຄງການດັ່ງກ່າວແມ່ນສຳລັບທັງສອງທຶນ STG ແລະ SCG ຫຼື ບໍ່, ທ່ານ ນາງ ດາວອນ ບຸນເພັງ ຕາງໜ້າຈາກສະຖານທູດອົດສະຕຣາລີ ໃນນາມອົງການຜູ້ປະສານງານ GPE ໄດ້ມີຄຳເຫັນວ່າ ງົບປະມານດັ່ງກ່າວແມ່ນສຳລັບພັດທະນາເອກະສານໂຄງການ STG ເທົ່ານັ້ນ ສ່ວນ SCG ແມ່ນມີຂະບວນການທີ່ແຕກຕ່າງ ແລະ ບໍ່ຈຳເປັນຕ້ອງພັດທະນາເອກະສານທີ່ສັບຊ້ອນຄື STG ແລະ ບໍ່ມີງົບປະມານຊ່ວຍເຫຼືອຈາກ GPE.

ທ່ານນາງ ທາກາໂຮະ ຫົວໜ້າພະແນກສຶກສາ ຈາກອົງການ ອຸຍນີເຊັບ ໄດ້ມີຄຳເຫັນເພີ່ມເຕີມວ່າ ອຸຍນີເຊັບ ໃນນາມອົງການປະສານງານ GPE ຮ່ວມກັບສະຖານທູດອົດສະຕຣາລີ ໄດ້ຖອນໂຕເອງອອກຈາກຂະບວນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ ເພື່ອຫຼີກລ່ຽງການຂັດກັນທາງດ້ານຜົນປະໂຫຍດຂອງບົດບາດການເປັນອົງການປະສານງານ ແລະ ການສະໝັກເປັນຕົວແທນຜູ້ຄຸ້ມຄອງທຶນ. ຫຼັງຈາກກອງປະຊຸມນີ້ ຖືວ່າການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນສິ້ນສຸດລົງ ອົງການ ອຸຍນີເຊັບ ກໍຈະສາມາດກັບມາປະຕິບັດບົດບາດອົງການປະສານງານ GPE ຕາມປົກກະຕິ. ໃນຖານະທີ່ຖືກຄັດເລືອກເປັນຕົວແທນຜູ້ຄຸ້ມຄອງທຶນ SCG ອຸຍນີເຊັບ ຈະເຮັດວຽກຮ່ວມກັບກະຊວງສຶກສາທິການ ແລະ ກິລາ ແລະ ອົງການຊ່ວຍເຫຼືອເດັກສາກົນ ເພື່ອກຳນົດບຸລິມະສິດສຳລັບທຶນ SCG ແລະ ໃຫ້ມີຄວາມຮັບປະກັນວ່າການນຳໃຊ້ງົບປະມານລະຫວ່າງ STG ແລະ SCG ບໍ່ມີການຊ້ຳຊ້ອນ. ນອກນັ້ນ, ທ່ານ ນາງ ທາກາໂຮະ ຍັງໄດ້ຖາມກ່ຽວກັບການລົງເກັບກຳຂໍ້ມູນຂັ້ນທ້ອງຖິ່ນ ພາຍໃຕ້ການພັດທະນາເອກະສານໂຄງການຂອງ STG ວ່າຈະມີການດຳເນີນການແນວໃດ?

ທ່ານ ສີທອງ ສີຂາວ ໄດ້ອະທິບາຍວ່າການເອົາຂໍ້ມູນ ແມ່ນຈຳເປັນຕ້ອງໃຫ້ມີຄວາມລະອຽດ, ດີແທ້ແມ່ນບັນດາໂຄງການຄວນສ້າງເວທີປຶກສາຫາລື ສ່ວນວາລະທີ່ສະເໜີໄປກ່ອນໜ້ານັ້ນແມ່ນແນວຄວາມຄິດເບື້ອງຕົ້ນຂອງຄະນະທີມງານໃນການກະກຽມການລົງເອົາຂໍ້ມູນ ຖ້າບໍ່ມີຄວາມຈຳເປັນກໍ່ອາດບໍ່ລົງໄປທ້ອງຖິ່ນກໍ່ໄດ້.

ຕາມການສະເໜີຂອງທ່ານປະທານ, ກອງປະຊຸມໄດ້ຮັບຮອງເອົາແຜນພັດທະນາໂຄງການເພື່ອເປັນບ່ອນອີງສຳລັບ ຂໍທຶນມາພັດທະນາເອກະສານໂຄງການ STG.

3.3. **ບົດສະເໜີທີ 3:** ທ່ານນາງ ພັນຖະໜອມ ດີດາຣາວົງ ຫົວໜ້າພະແນກແຜນການ, ກົມແຜນການ ສະເໜີການກະກຽມສ້າງແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ 10 (2026-2030) ໂດຍສະເພາະ ແມ່ນບົດຮຽນທີ່ຖອດຖອນໄດ້ຈາກແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ 9 (2021-2025) ເພື່ອມາເປັນທິດທາງໃນການສ້າງແຜນ 5 ປີ ຄັ້ງທີ 10 ເຊິ່ງໃນການນຳສະເໜີ ແມ່ນໄດ້ລົງເລິກສະເພາະກ່ຽວກັບເປົ້າໝາຍ, ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ຈຳນວນໜຶ່ງ ທີ່ຕິດພັນກັບວຽກງານສຶກສາ, ຂອບເວລາໃນການສ້າງແຜນ ແລະ ຄູ່ຮ່ວມພັດທະນາທີ່ມີທ່າແຮງ ຈະສືບຕໍ່ສະໜັບສະໜູນໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນ. ສ່ວນວຽກງານວິທະຍາສາດ ແລະ ກິລາ ແມ່ນຈະໄດ້ມີການປຶກສາຫາລືກັນລະອຽດຕື່ມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ນາງ ພຸດທະສອນ ສິນທະວົງ ຈາກຫ້ອງການສະພາວິທະຍາສາດເຫັນດີກັບຜົນໄດ້ຮັບລະດັບສູງ ແລະ ໄດ້ຍົກບັນຫາກ່ຽວກັບພັນທະສາກົນ ກໍ່ຄືການບັນລຸ SDG 9 ທີ່ມີເປົ້າໝາຍໃນວິໄສທັດຂອງ ສປປ ລາວ ແຕ່ຍັງບໍ່ມີງົບປະມານພຽງພໍໃນການຈັດຕັ້ງປະຕິບັດ. ໃນການຄົ້ນຄວ້າວິທະຍາສາດກໍ່ເຫັນວ່າມີຄວາມສຳຄັນ ເພື່ອນຳໄປເຊື່ອມໂຍງຕໍ່ກັບລະບົບການຮຽນການສອນທີ່ເປັນວິທະຍາສາດເຕັກໂນໂລຊີ, ການຜັນຂະຫຍາຍໃຫ້ວຽກງານວິທະຍາສາດເຂົ້າໃນການສຶກສາ ໂດຍການເຊື່ອມສານເຂົ້າໃນຫຼັກສູດຕື່ມ, ສະເໜີໃຫ້ມີການປຶກສາຫາລືຕື່ມກັບພາກສ່ວນວິທະຍາສາດ.

ປະທານຮ່ວມ ທ່ານນາງ ເວຍເລີ ໄດ້ມີຄຳເຫັນວ່າ ໄລຍະເວລາການກະກຽມ ແລະ ສ້າງແຜນພັດທະນາ 5 ປີ ຄັ້ງ 10 ມີເວລາທີ່ຈຳກັດຫຼາຍ.

ທ່ານນາງ ຄຳຕັນ ຈັນທິ ຜູ້ຕາງໜ້າຈາກ ທະນາຄານພັດທະນາອາຊີ ມີຄຳເຫັນວ່າແຜນ 5 ປີ ຄັ້ງທີ 9 (2021-2025) ມີຂໍ້ມູນຫຼາຍໃນບາງຂະແໜງການຍ່ອຍເຊັ່ນ ຊັ້ນປະຖົມສຶກສາ ແຕ່ບາງຂະແໜງການຍ່ອຍກໍບໍ່ມີຂໍ້ມູນພຽງພໍ ໂດຍສະເພາະແມ່ນໃນຂັ້ນສູງຂຶ້ນຈາກປະຖົມ ເຊັ່ນ ມັດທະຍົມ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ. ເພື່ອໃຫ້ໄດ້ຂໍ້ມູນຈາກທຸກຂະແໜງການຍ່ອຍ ສະເໜີໃຫ້ມີການສ້າງຟອມເກັບກຳຂໍ້ມູນຈາກບັນດາຂະແໜງການຍ່ອຍເພື່ອໃຫ້ທຸກພາກສ່ວນໄດ້ສະໜອງຂໍ້ມູນທີ່ທາງກົມແຜນການຕ້ອງການເພື່ອພັດທະນາແຜນ 10.

ທ່ານ ສີທອງ ສີຂາວ ໄດ້ແຈ້ງຕໍ່ກອງປະຊຸມວ່າ ສະຫະພາບເອີຣົບຈະສືບຕໍ່ສະໜັບສະໜູນທາງດ້ານວິຊາການ ໂດຍມີຜູ້ຊ່ຽວຊານສືບຕໍ່ສະໜັບສະໜູນກົມແຜນການ ເປັນຊ່ຽວຊານຫຼັກໃນການສ້າງແຜນ 10 ຢ່າງໜ້ອຍຈົນເຖິງທ້າຍປີ 2024 ເຊິ່ງມີເວລາ 20 ວັນສຳລັບການສ້າງແຜນ 10. ນອກນັ້ນ ກໍມີຫຼາຍຄູ່ຮ່ວມພັດທະນາທີ່ໃຫ້ການສະໜັບສະໜູນໃນຂະແໜງ ການຍ່ອຍຕ່າງໆ ທີ່ຈະໃຫ້ການສະໜັບສະໜູນໃນການສ້າງແຜນດັ່ງທີ່ໄດ້ມີຂໍ້ມູນໃນບົດສະເໜີ.

3.4. **ບົດສະເໜີທີ 4:** ທ່ານ ອານຸແພງ ແກ້ວວົງສາ ຮອງຫົວໜ້າກົມແຜນການ, ສະເໜີກ່ຽວກັບການຂະຫຍາຍ ແລະ ເພີ່ມງົບປະມານເຂົ້າໃນໂຄງການ GPE III, ໂດຍສະເພາະແມ່ນອົງປະກອບທີ 1 ການກະກຽມ ແລະ ຊຸກຍູ້ຜູ້ຮຽນ ແລະ ອົງປະກອບທີ 3 ການຄຸ້ມຄອງບໍລິຫານໂຮງຮຽນ ແລະ ໂຄງການທີ່ມີປະສິດທິພາບ, ຈັດສັນງົບປະມານເຂົ້າໃນກິດຈະກຳທີ່ເປັນບຸລິມະສິດ ແລະ ສຸກເສີນ, ສຸມໃສ່ 40 ເມືອງເປົ້າໝາຍທຸກຍາກທີ່ສຸດ, ຜົນໄດ້ຮັບຄາດໝາຍວ່າໃຫ້ມີຈຳນວນເດັກນ້ອຍ, ຈຳນວນຄົວເຮືອນ ແລະ ຜູ້ເຮັດວຽກງານດ້ານການສຶກສາໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ. ລາຍລະອຽດເພີ່ມເຕີມໃນບົດສະເໜີ.

ທ່ານ ນາງ ດາຣາ ພຣະກອນຄຳ ຫົວໜ້າກົມການເງິນ ໃຫ້ຄຳເຫັນວ່າ ການຂະຫຍາຍກິດຈະກຳຄວນເນັ້ນໃນເລື່ອງຄວາມຍືນຍົງ ແລະ ຮັບປະກັນເລື່ອງປະສິດທິພາບ, ກຸ່ມເປົ້າໝາຍຈະຂະຫຍາຍຕື່ມຕາມເປົ້າໝາຍເກົ່າບໍ່ ຫຼື ຂະຫຍາຍໄປເມືອງໃໝ່, ການຈັດຕັ້ງຜ່ານມາໃນຈຳນວນ 40 ເມືອງກໍ່ຄວນມີການປະເມີນຄືນເຊັ່ນດຽວກັນ, ການອອກແບບຄວນໃຫ້ມີສ່ວນຮ່ວມຈາກກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ.

ທ່ານ ຊ່ຽວຊານ ອາວຸໂສ ຈາກທະນາຄານໂລກ ສະເໜີໃຫ້ເນັ້ນໃສ່ 40 ເມືອງ ແຕ່ເພີ່ມກຸ່ມເປົ້າໝາຍຕື່ມ ທີ່ບໍ່ໄດ້ຈັດຕັ້ງປະຕິບັດຜ່ານມາ ໂດຍສະເພາະກິດຈະກຳການສອນຫ້ອງຄວບ ເນື່ອງຈາກວ່າເມືອງເປົ້າໝາຍແມ່ນໄດ້ມີການຝຶກອົບຮົມສ້າງຂີດຄວາມສາມາດໃຫ້ຂັ້ນເມືອງແລ້ວ ຖ້າຂະຫຍາຍໄປເມືອງໃໝ່ແມ່ນອາດຕ້ອງໃຊ້ເວລາຕື່ມໃນການສ້າງຂີດຄວາມສາມາດ.

ທ່ານປະທານກອງປະຊຸມຂໍໃຫ້ໂຄງການ GPE III ແລະ ທີມງານຊ່ຽວຊານໄປປຶກສາກັນຕື່ມ ເພື່ອໃຫ້ສາມາດໄດ້ຂໍ້ສະຫຼຸບ ແລະ ປະຕິບັດໃຫ້ມີປະສິດຕິຜົນ.

3.5. **ວາລະທີ 5:** ທ່ານນາງ ພັນຖະໜອມ ດີດາຣາວົງ ຫົວໜ້າພະແນກແຜນການ ກົມແຜນການ ໄດ້ລາຍງານກ່ຽວກັບ ແຜນບຸລິມະສິດໃນການພັດທະນາການສຶກສາ ສຳລັບສົກຮຽນ 2024-25 ຕາມມະຕິກອງປະຊຸມຜູ້ບໍລິຫານການສຶກສາ ປະຈຳສົກຮຽນ 2023-2024 ໂດຍສະເພາະ ແມ່ນບັນດາມາດຕະການທີ່ຕ້ອງໄດ້ສຸມໃສ່ ເພື່ອແກ້ໄຂບັນຫາການເຂົ້າຮຽນທີ່ຫຼຸດລົງ, ການປະລະທີ່ເພີ່ມຂຶ້ນ, ການຍົກສູງຄຸນນະພາບການສຶກສາ, ແກ້ໄຂບັນກາການຂາດແຄນຄູ ແລະ ແກ້ໄຂບັນຫາກ່ຽວກັບການບໍລິຫານ-ຄຸ້ມຄອງ ການສຶກສາ.

## 4. ສະຫຼຸບ:

4.1.1. ທ່ານນາງ ເວຍເລີ ສະເມັດ ຫົວໜ້າຝ່າຍການຮ່ວມມື, ຫ້ອງການສະຫະພາບເອີຣົບ, ປະທານຮ່ວມ ໄດ້ສະຫຼຸບຜົນຂອງກອງປະຊຸມ ໃນ 5 ວາລະຄືດັ່ງນີ້:

- ຮັບຮອງຜົນການຄັດເລືອກຕົວແທນຜູ້ຄຸ້ມຄອງທຶນ GPE (STG ແລະ SCG), ຮັບຮອງແຜນ ແລະ ຂອບເວລາພັດທະນາເອກະສານໂຄງການ STG, ການກະກຽມສ້າງແຜນ 5 ປີ ຄັ້ງທີ 10 (2026-2030) ໃຫ້ມີຄວາມກົມກຽວ, ປຶກສາຫາລືກ່ຽວກັບແຜນການເພີ່ມງົບປະມານສຳລັບ ໂຄງການ GPE III ໂດຍມີການພິຈາລະນາທາງເລືອກໃນຂັ້ນຕອນຕໍ່ໄປ; ການນຳໃຊ້ເງິນກູ້ຢືມ ຄວນໄດ້ຮັບການພິຈາລະນາຢ່າງຮອບຄອບ ເພື່ອຮັບປະກັນປະສິດທິຜົນຂອງການນຳໃຊ້ທຶນ.
- ແຜນບຸລິມະສິດໃນການພັດທະນາການສຶກສາ ສຳລັບສົກຮຽນ 2024-2025, ຂໍໃຫ້ມີການຄັດ ຈ້ອນ ແລະ ເນັ້ນຄວາມສຳຄັນແທ້, ນຳໃຊ້ງົບປະມານໃຫ້ມີປະສິດທິຜົນ ເພື່ອແກ້ໄຂບັນຫາອັນ ຮີບດ່ວນຂອງຂະແໜງການສຶກສາ. ຄວນມີກົນໄກໃນການຕິດຕາມ ແລະ ລາຍງານເພື່ອ ການຈັດຕັ້ງບຸລິມະສິດໃຫ້ມີປະສິດທິຜົນ.
- ການກະກຽມການສະເໜີທຶນພັດທະນາເອກະສານໂຄງການ STG ຂໍໃຫ້ມີການດຳເນີນຢ່າງຮີບ ດ່ວນ ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມເວລາທີ່ກຳນົດ.

4.1.2. ປະທານສະຫຼຸບ: ທ່ານ ປອ ສຳລານ ພັນຄະວົງ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ສະຫຼຸບກອງປະຊຸມ ເຊິ່ງໄດ້ຮັບຮອງເອົາ 2 ເອກະສານຄື: 1). ຮັບຮອງຜົນການຄັດເລືອກຕົວ ແທນຜູ້ຄຸ້ມຄອງທຶນ GPE (STG ແລະ SCG) ແລະ 2). ຮັບຮອງແຜນພັດທະນາເອກະສານ ໂຄງການ STG ເພື່ອເປັນບ່ອນອີງໃນການຮັບທຶນມາພັດທະນາເອກະສານໂຄງການ STG, ນອກຈາກນັ້ນທີ່ປະຊຸມຍັງໄດ້ປຶກສາຫາລື, ຄົ້ນຄວ້າເນື້ອໃນເອກະສານທີ່ສຳຄັນ ຊຶ່ງສາມາດຕີລາຄາ ໄດ້ວ່າໄດ້ຮັບຜົນສູງ ຊຶ່ງຍັ້ງຢືນຈາກການມີສ່ວນຮ່ວມຈາກບັນດາທ່ານຜູ້ແທນ. ກອງປະຊຸມດຳເນີນ ເຄິ່ງວັນ ນັບແຕ່ເວລາ 14:00 ແລະ ອັດລົງໃນເວລາ 16:50 ນາທີຂອງມື້ດຽວກັນ.

ທ່ານປະທານໄດ້ສະແດງຄວາມຂອບໃຈມາຍັງບັນດາປະທານຮ່ວມ, ຜູ້ເຂົ້າຮ່ວມທັງໝົດຈາກ ກະຊວງສຶກສາທິການ ແລະ ກິລາ, ກະຊວງອ້ອມຂ້າງ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ໄດ້ໃຫ້ການສະ ໜັບສະໜູນ ຕໍ່ການພັດທະນາການສຶກສາ ຢູ່ ສປປ ລາວ ຢ່າງຕໍ່ເນື່ອງ. ກອງເລຂາຈະສ້າງບົດລາຍງານ ຂອງກອງປະຊຸມ ແລະ ລາຍງານກອງປະຊຸມໃນລະດັບຜູ້ບໍລິຫານ.

| **ປະທານ** | **ປະທານຮ່ວມ** | **ປະທານຮ່ວມ** |
|---|---|---|
| ........................................ | ........................................ | ........................................ |
| **ທ່ານ ປອ ສຳລານ ພັນຄະວົງ** | **ທ່ານນາງ ເບັນນີຕາ ຊຳເມີວີວ** | **ທ່ານນາງ ເວຍເລີ ສະເມັດ** |
| ຮອງລັດຖະມົນຕີ | ຮອງເອກອັກຄະລັດຖະທູດ | ຫົວໜ້າຝ່າຍການຮ່ວມມື |
| ກະຊວງສຶກສາທິການ ແລະ ກິລາ | ສະຖານທູດອົດສະຕຣາລີ | ຫ້ອງການຜູ້ຕາງໜ້າສະຫະພາບ |
| | | ເອີຣົບ ປະຈຳ ສປປ ລາວ |